ບໍລິສັດ ຫຸ້ນສ່ວນການລົງທຶນ ກາວຊູ ດັກລັກ
(**DRI**)
ເລກທີ 52/ຂລ-ສພບຫ

ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ
ສັນຕິພາບ ເສລີພາບ ຄວາມຜາສຸກ
*ບວນມາທວດ, ວັນທີ 19 ເດືອນ 11 ປີ 2024*

# ຂໍ້ຕົກລົງ
## ວ່າດ້ວຍການອະນຸມັດແຜນການຄຸ້ມຄອງປ່າໄມ້ແບບຍືນຍົງ (ສະບັບດັດແກ້) ຂອງບໍລິສັດດັກລັກຣັບເບີຈຳກັດ

## ສະພາບໍລິຫານ
## ບໍລິສັດ ຫຸ້ນສ່ວນການລົງທຶນກາວຊູ ດັກລັກ

ອີງຕາມກົດໝາຍວິສາຫະກິດ ສະບັບເລກທີ 68/2014/ສພຊ 13 ລົງວັນທີ 26 ພະຈິກ 2014;

ອີງຕາມກົດລະບຽບຂອງບໍລິສັດຫຸ້ນສ່ວນການລົງທຶນກາວຊູ ດັກລັກ ສະບັບເພີ້ມເຕີມ ທີ່ໄດ້ຮັບຮອງໂດຍ ກອງ ປະຊຸມໃຫຍ່ຜູ້ຖືຫຸ້ນໃນຄັ້ງວັນທີ 19 ເມສາ 2023;

ອີງຕາມກົດລະບຽບພາຍໃນສະບັບປັບປຸງ ແລະ ເພີ່ມເຕີມຂອງບໍລິສັດ ຮັບຮອງໂດຍກອງ ປະຊຸມໃຫຍ່ຜູ້ຖື ຫຸ້ນ ໃນວັນທີ 19 ເມສາ 2023;

ອີງຕາມມະຕິຕົກລົງເລກທີ 03/ມລ- ສພບຫ ລົງວັນທີ 19 ມີນາ 2024 ຂອງສະພາບໍລິຫານຂອງບໍລິສັດ.

ອີງຕາມຂໍ້ຕົກລົງສະບັບເລກທີ 19/ຂລ-ບສ ລົງວັນທີ 19 ມີນາ 2024 ຂອງສະພາບໍລິຫານ ວ່າດ້ວຍການອະນຸມັດແຜນການຄຸ້ມຄອງປ່າໄມ້ແບບຍືນຍົງຂອງບໍລິສັດດັກລັກຣັບເບີຈຳກັດ

# ຂໍ້ຕົກລົງ

**ມາດຕາ 1:** ຮັບຮອງເອົາ "ແຜນການຄຸ້ມຄອງປ່າໄມ້ແບບຍືນຍົງ ໄລຍະ 2024-2054" ສະບັບດັດແກ້ ຂອງບໍລິສັດ ດັກລັກ ຣັບເບີ ຈຳກັດ (ມີແຜນງານລັດຕິດ).

**ມາດຕາ 2:** ຜູ້ອຳນວຍການໃຫຍ່ບໍລິສັດ DRI ແລະ ຜູ້ອຳນວຍການ Daklaoruco ມີໜ້າທີ່ເຜີຍແຜ່ ແລະ ຈັດຕັ້ງປະຕິບັດແຜນປະຈຳປີ ບົນພື້ນຖານແຜນການຄຸ້ມຄອງປ່າໄມ້ແບບ ຍືນຍົງ ທີ່ໄດ້ອະນຸມັດຈາກສະພາບໍລິຫານ.

ຜູ້ອຳນວຍການໃຫຍ່ບໍລິສັດ DRI ຕິດຕາມກວດກາ, ຊີ້ນຳ ແລະ ໃຫ້ທິດທາງໃນການຈັດຕັ້ງປະຕິບັດຂອງ ບໍລິສັດ Daklaoruco ຢ່າງເປັນປະຈຳ ເພື່ອໃຫ້ສຳເລັດເນື້ອໃນຂອງແຜນງານນີ້. ໃນທຸກໆປີ, ຜູ້ອຳນວຍການໃຫຍ່ ຂອງບໍລິສັດ DRI ມີໜ້າທີ່ໃນການລາຍງານຜົນໃນການປະຕິບັດແຜນ ງານ. ໃນການຈັດຕັ້ງປະຕິບັດຖ້າມີບັນຫາ ເກີດຂຶ້ນເຊິ່ງບໍ່ເປັນໄປຕາມແຜນແມ່ນໃຫ້ລາຍງານສະພາບໍລິຫານ ເພື່ອຂໍອະນຸມັດ ກ່ອນການຈັດຕັ້ງປະຕິບັດ.

**ມາດຕາ 3:** ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນໃຫ້ຂໍ້ຕົກລົງສະ ບັບເລກທີ 19/ຂລ-ບສ ລົງວັນທີ 19 ມີນາ 2024 ຂອງສະພາບໍລິຫານ. ບັນດາສະມາຊິກສະພາບໍລິຫານ, ຄະນະອຳນວຍການ DRI, ບັນດາຫ້ອງການຕ່າງໆຂອງ DRI, ແລະ ບໍລິສັດ Daklaoruco ມີໜ້າທີ່ຈັດຕັ້ງປະຕິ ບັດຂໍ້ຕົກລົງສະບັບນີ້ຢ່າງເຄັ່ງຄັດ/.

**ຕາງໜ້າ.ສະພາບໍລິຫານ**

**ບ່ອນນຳສົ່ງ:**
- ຄືມາດຕາ 3;
- ຄະນະກວດສອບ;
- ສຳເນົາ.

**ຫງວຽນວ່ຽດເຕື້ອງ**